# ຖະແຫຼງການວຽງຈັນວ່າດ້ວຍການຮ່ວມມືພັດທະນາຢ່າງມີປະສິດທິຜົນ (2026-2035)

*ເສັ້ງການພັດທະນາແບບຍືນຍົງຜ່ານການພົວພັນກັບຄູ່ຮ່ວມພັດທະນາທີ່ດີ*



ໂດຍ ທ່ານ ພູທອງ ສິມມາລາ

ກົມຮ່ວມມື ແລະ ການເງິນສາກົນ



# ໂຄງສ້າງ ແລະກອບລວມ

01

## ຄຳບັນຍາຍ & ເນື້ອໃນ

ທົບທວນຄືນຜົນການຮ່ວມມືກັບຄູ່ຮ່ວມພັດທະນາໃນສອງທົດສະວັດຜ່ານມາ, ສິ່ງທ້າທາຍໃໝ່ໃນປັດຈຸບັນທີ່ ສປປ ລາວ ກຳລັ້ງປະເຊີນຢູ່.

02

## ທິດທາງການ

ທິດທາງການຮ່ວມມືພັດທະນາແຕ່ປີ 2026-2035, ຖອດຖອນບົດຮຽນ ເພື່ອປັບຕົວໃຫ້ສອດຄ່ອງກັບສະພາບການຕົວຈິງອັນໃໝ່.

03

## ໂຄງປະກອບການປະສານງານ

ເພີ່ມທະວີບັນດາກົນໄກການປະສານງານ ໂດຍການປະຕິຮູບຂະບວນການໂຕະມົນ ແລະ ເສີມສ້າງຄວາມເຂັ້ມແຂງໃນການໜ່ວຍງານປົກສາຫາລືກັບຄູ່ຮ່ວມພັດທະນາ.

04

## ຂອບການຈັດຕັ້ງປະຕິບັດ

ການຕິດຕາມການຈັດຕັ້ງປະຕິບັດໂດຍອີງໃສ່ຜົນໄດ້ຮັບ, ການທົບທວນປະຈຳໄຕມາດ, ລະບົບການຄຸ້ມຄອງຄວາມຮູ້.

     

# ເນື້ອໃນຫຼັກຂອງ VD III

### 1. ຄວາມເປັນເຈົ້າການ ແລະຄວາມເປັນຜູ້ນຳ

ເສີມຂະຫຍາຍການລະດົມຊັບພະຍາກອນພາຍໃນປະເທດ ແລະຄຸ້ມຄອງຫຼຸດການພົ້ນອອກຈາກ LDC ແລະການຄຸ້ມຄອງລະບົບການເງິນພາກລັດທີ່ດີຂື້ນ.

### 2. ຄູ່ຮ່ວມພັດທະນາທີ່ມີຄຸນນະພາບ

ຍົກສູງການເປັນຄູ່ຮ່ວມມພັດທະນາ ໂດຍການມີສ່ວນຮ່ວມຂອງພາກເອກະຊົນ, ປັບປຸງສິ່ງແວດລ້ອມສັງຄົມພົນລະເຮືອນ, ຂອບການຮ່ວມມືໃນລະດັບພາກພື້ນ.

### 3. ການຈັດຕັ້ງປະຕິບັດໂດຍອີງໃສ່ຜົນໄດ້ຮັບ

ກຳນົດນະໂຍບາຍທີ່ອີງໃສ່ຂໍ້ມູນຈາກລະບົບ M&E ດິຈິຕອນ, ຂອບວຽກທີ່ຄຳນຶງເຖິງການປ່ຽນແປງຂອງດິນຟ້າອາກາດ, ການຕິດຕາມທີ່ເນັ້ນໃສ່ຜົນໄດ້ຮັບ.

### 4. ຄວາມໂປ່ງໃສ & ຄວາມຮັບຜິດຊອບ

ລະບົບຄວາມໂປ່ງໃສດ້ວຍການນຳໃຊ້ດິຈິຕອນ, ກົນໄກຄຸ້ມຄອງການຮັບຜິດຊອບຢ່າງຮອບດ້ານ, ແລະ ເສີມສ້າງຂອບວຽກງານຕ້ານການສໍ້ລາດບັງຫຼວງດ້ວຍການລາຍງານໃຫ້ທັນເວລາຕົວຈິງ.

### 5. ການຄາດຄະເນ & ຄວາມກົມກຽວກັນ

ຂອບການເງິນໄລຍະກາງ, ການເຊື່ອມໂຍງວຽກງານການເງິນທີ່ຕິດພັນກັບການປ່ຽນແປງດິນຟ້າອາກາດ, ລະບົບການວາງແຜນ ແລະ ການດຳເນີນງານທີ່ມີຄວາມກົມກຽວກັນ.

### 6. ການເສີມສ້າງຄວາມສາມາດ

ເສີມສ້າງຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ, ຄວາມສາມາດໃນການຫັນເປັນດິຈິຕອນ ແລເສີມສ້າງຄວາມອາສາມາດໃຫ້ສະຖາບັນໃນການປັບຕົວເຂົ້າກັບການພັດທະນາແບບຍືນຍົງ.

     

# ຂະບວນການຮ່ວມມືໃນ ສປປ ລາວ

**1** **VD I - 2006-2015: ປະສິດທິພາບຂອງການຊ່ວຍເຫຼືອ**

ຖະແຫຼງການວຽງຈັນ ໄລຍະທີ່ I ໄດ້ສຸມໃສ່ປະສິດທິພາບການຊ່ວຍເຫຼືອ, ສ້າງກົນໄກປະສານງານຂັ້ນພື້ນຖານ ແລະ ການສົນທະນາຮ່ວມກັບຜູ້ໃຫ້ທຶນ ໂດຍຜ່ານຂະບວນການໂຕະມົນ.

**2** **VD II - 2016-2025: ຈຸດສຸມຂອງຄູ່ຮ່ວມງານ**

ຖະແຫຼງການ ໄລຍະທີ່ II ໄດ້ເປີດກວ້າງວິໄສທັດເພື່ອຮັບເອົາການພົວພັນກັບຄູ່ຮ່ວມມືແບບຮອບດ້ານ, ຮູບແບບການຮ່ວມມືທີ່ຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງຫຼາຍຜູ້ໃຫ້ທຶນນອກເໜືອຈາກຜູ້ໃຫ້ທຶນໄລຍະຜ່ານມາ.

**3** **VD III - 2026-2035: ເພີ່ມທະວີການຮ່ວມມື**

ຖະແຫຼງການໄລຍະທີ່ III ເນັ້ນໜັກໃສ່ການເປັນຄູ່ຮ່ວມມືທີ່ມີປະສິທິຜົນ, ການຈັດຕັ້ງປະຕິບັດທີ່ອີງໃສ່ຜົນໄດ້ຮັບ, ແລະ ການປະສານງານຮ່ວມກັນຂອງບັນດາຄູ່ຮ່ວມພັດທະນາໃນການສະໜອງທຶນທີ່ຫຼາກຫຼາຍຮອບດ້ານ.



# ຄວາມແຕກຕ່າງທີ່ ສຳ ຄັນຈາກ VD II

**ຂົງເຂດຈຸດສຸມໃໝ່**

- ຄຸ້ມຄອງການອອກຈາກ LDC ແລະ ການ ວາງແຜນການຫັນປ່ຽນ.
- ການເຊື່ອມໂຍງວຽກງານການເງິນທີ່ຕິດພັນກັບການປ່ຽນແປງຂອງດິນຟ້າອາກາດເຂົ້າໃສ່ວຽກຂອງທຸກຂະແໜງການ.
- ການຫັນເປັນດີຈີຕອນ ແລະ ທັນສະໄໝ.
- ຂອບການຮ່ວມມືໃນລະດັບພາກພື້ນ ແລະ ຕາມເຂດຊາຍແດນ.
- ການສະໜອງທຶນເຂົ້າໃສ່ການພັດທະນາທີ່ສົມບູນແບບນອກຈາກ ODA ໃນໄລຍະຜ່ານມາ.

**ກົນໄກການເພີ່ມປະສິດທິພາບ**

- ຂະບວນການໂຕະມົນທີ່ຂັບເຄື່ອນເພື່ອສຸມໃສ່ຜົນໄດ້ຮັບທີ່ດີ.
- ລະບົບຄວາມໂປ່ງໃສແບບດີຈີຕອນ ແລະ ການລາຍງານໃຫ້ທັນກັບສະພາບການຕົວຈິງ
- ການກຳນົດນະໂຍບາຍທີ່ອີງໃສ່ການວິເຄາະໃນລະດັບສູງ.
- ເສີມສ້າງຄວາມເຂັ້ມແຂງໃຫ້ສະຖາບັນໃຫ້ມີຄວາມສາມາດປັບຕົວເຂົ້າກັບສິ່ງທ້າທາຍທີ່ສັບສົນ.
- ການຄາດຄະເນຂອບການເງິນໄລຍະກາງສຳລັບການຄາດຄະເນ








# ສິ່ງທີ່ຍັງຄົງຢູ່ຈາກ VD I ເຖິງ VDII ແລະໃນປັດຈຸບັນ VD III

### ຂະບວນການປະຊຸມໂຕະມົນ

ສືບຕໍ່ເປັນເວທີຕົ້ນຕໍສໍາລັບການປຶກສາຫາລືເພື່ອການພັດທະນາ ໂດຍການຂັບເຄື່ອນວຽກງານຂະບວນການໂຕະມົນໂດຍອີງໃສ່ຜົນໄດ້ຮັບ ແລະ ການຈັດຕັ້ງປະຕິບັດຕົວຈິງ.

### ໜ່ວຍງານປຶກສາຫາລືຮ່ວມກັບຄູ່ຮ່ວມພັດທະນາ

ຮັກສາເປັນກົນໄກປະສານງານທາງດ້ານວິຊາການ ແຕ່ໄດ້ປະຕິຮູບໂດຍເນັ້ນໃສ່ຂອບຜົນໄດ້ຮັບທີ່ຊັດເຈນກ່ວາເກົ່າ ແລະ ການເຊື່ອມໂຍງໃນລະດັບນະໂຍບາຍໃຫ້ຫຼາຍຂຶ້ນ.

### ຫຼັກການພື້ນຖານ

ຫຼັກການພື້ນຖານຍັງປະກອບມີ 6 ແລະຈະເອົາໃຈໃສ່ຕໍ່ສິ່ງທ້າທ້າຍໃໝ່ ແຕ່ຈະຮັກສາຫຼັກໝັ້ນຄວາມເປັນເຈົ້າການ ແລະ ຄູ່ຮ່ວມມືພັດທະນາ.

### ແນວທາງການມີສ່ວນຮ່ວມຫຼາຍຝ່າຍ

ສືບຕໍ່ເນັ້ນໜັກການພົວພັນຄູ່ຮ່ວມມືແບບຮອບດ້ານ ລະຫວ່າງລັດຖະບານ, ຄູ່ຮ່ວມມືພັດທະນາ, ສັງຄົມພົນລະເຮືອນ, ພາກເອກະຊົນ ແລະ ນັກສຶກສາ.

     

# 5 ຄຳໝັ້ນສັນຍາຫຼັກ

1 **ເສີມສ້າງຄວາມເຂັ້ມແຂງໃຫ້ລະບົບແຫ່ງຊາດ**

ເສີມສ້າງຄວາມອາດສາມາດໃຫ້ສະຖາບັນ ແລະ ຄວາມສາມາດພາຍໃນປະເທດ ເພື່ອເປັນການຄຸ້ມຄອງການພັດທະນາແບບຍືນຍົງ.

2 **ການປັບປຸງການຄາດຄະເນ**

ປັບປຸງຄວາມໂປ່ງໃສ ແລະ ຄາດຄະເນແຜນການຮ່ວມມືສຳລັບການພັດທະນາ ເພື່ອການວາງແຜນ ແລະ ການຈັດຕັ້ງປະຕິບັດ ທີ່ດີຂຶ້ນກ່ວາເກົ່າ.

3 **ການສົ່ງເສີມການເປັນຄູ່ຮ່ວມງານລວມ**

ມີສ່ວນຮ່ວມກັບພາກສ່ວນກ່ຽວຂ້ອງຂອງການພັດທະນາລວມທັງສັງຄົມພົນລະເຮືອນ, ພາກເອກະຊົນ, ແລະຊຸມຊົນ.

4 **ສະໜັບສະໜູນການວາງແຜນໂດຍອີງໃສ່ຫຼັກຖານ**

ການປັບປຸງລະບົບຂໍ້ມູນແລະໂຄງການຕິດຕາມກວດກາສຳລັບການຕັດສິນໃຈທີ່ມີຂໍ້ມູນຂ່າວສານ.

5 **ປັບປຸງການລະດົມທຶນ**

ເພີ່ມທະວີການລະດົມແຫຼ່ງທຶນພາຍໃນປະເທດໃຫ້ແກ່ການພັດທະນາແບບຍືນຍົງ.

     

# ຂອບການສະໜອງທຶນການພັດທະນາແບບຮອບດ້ານ

### ODA ແບບດັ້ງເດີມ

ການຊ່ວຍເຫຼືອສອງຝ່າຍ ແລະ ຫຼາຍຝ່າຍ, ການຮ່ວມມືດ້ານວິຊາການ, ການຊ່ວຍເຫຼືອລ້າເຂົ້າໃສ່ວຽກຂະແໜງສັງຄົມ ແລະ ພົນລະເມືອງທີ່ດ້ອຍໂອກາດ.

### ຮູບແບບການເປັນຄູ່ຮ່ວມພັດທະນາ

ການຮ່ວມມືແບບໃຕ້-ໃຕ້, ການຮ່ວມມືໃນຮູບແບບສາມຫລ່ຽມ, ກົນໄກຮ່ວມມືໃນພາກພື້ນ, ກອງທຶນສະໜອງທຶນໃຫ້ວຽກງານປ່ຽນແປງດິນຟ້າອາກາດ ແລະ ສິ່ງແວດລ້ອມ.

### ພາກເອກະຊົນ

ການລົງທຶນໂດຍກົງຈາກຕ່າງປະເທດ, ການຮ່ວມມື ລະຫວ່າງພາກລັດ - ເອກະຊົນ, ກົນໄກການຄໍ້າປະກັນການສະໜອງທຶນ, ການລິເລີ່ມພັດທະນາພາກເອກະຊົນ.

### ແຫຼ່ງການລາຍຮັບພາຍໃນ

ສ້າງຄວາມເຂັ້ມແຂງໃຫ້ແກ່ການເກັບລາຍຮັບຈາກສ່ວຍສາອາກອນ, ລາຍຮັບທີ່ບໍ່ແມ່ນສ່ວຍສາອາກອນ, ການຄຸ້ມຄອງໜີ້ສາທາລະນະ, ການປະກອບສ່ວນຂອງລັດວິສາຫະກິດ.

### ທາງເລືອກທາງດ້ານການເງິນ

ພັນທະບັດສີຂຽວ, ການເງິນດິຈິຕອນ, ການລົງທຶນທີ່ມີຜົນກະທົບ, ການພັດທະນາພັນທະບັດເພື່ອສະໜອງທຶນໃນວຽກທີ່ຕິດພັນກັບນະວັດກຳອັນໃໝ່.

     

# ຂອບການຈັດຕັ້ງປະຕິບັດ ແລະ ການຕິດຕາມ

### ການທົບທວນປະຈຳໄຕມາດ

ການຕິດຕາມຄວາມຄືບໜ້າຢ່າງເປັນປົກກະຕິຕໍ່ກັບຈຸດປະສົງທີ່ໄດ້ຕົກລົງກັນດ້ວຍການກຳນົດເວລາ ແລະ ການແກ້ໄຂສິ່ງທ້າທາຍໃນການຈັດຕັ້ງປະຕິບັດ

### ການປະເມີນປະຈຳປີ

ການວິເຄາະຄືນຜົນສຳເລັດ, ຂໍ້ຄົງຄ້າງ ບົນພື້ນຖານໜັງສືປະກອບຄຳເຫັນຢ່າງທາງການເພື່ອເປັນບ່ອນອີງໃນການປັບປຸງ.

### ການປະເມີນໄລຍະກາງ

ການປັບປຸງຍຸດທະສາດ ໂດຍອີງໃສ່ການຈັດຕັ້ງປະຕິບັດຕົວຈິງ ແລະ ການພັດທະນາທີ່ມີການປ່ຽນແປງຕາມຄວາມຮຽກຮ້ອງຕ້ອງການຂອງສະພາບການຕົວຈິງ.

### ການຄຸ້ມຄອງຄວາມຮູ້

ລະບົບຄຸ້ມຄອງ ແລະ ແລກປ່ຽນເອກະສານ ທີ່ຖືກຍອມຮັບໃນການຈັດຕັ້ງປະຕິບັດຕົວຈິງ, ການຖອດຖອນບົດຮຽນ ເພື່ອເສີມສ້າງລະບົບການຮ່ວມມືທີ່ມີການປັບຕົວ.

### ການຕັດສິນໃຈທີ່ອີງໃສ່ຫຼັກຖານ

ການວິເຄາະໃນລະດັບຂັ້ນສູງ ແລະ ການນຳໃຊ້ລະບົບດິຈິຕອນເພື່ອຕິດຕາມ M&E ແມ່ນຈະສືບຕໍ່ປັບປຸງ ແລະ ການປັບປຸງຍຸດທະສາດນະໂຍບາຍ.



# ສັງລວມຂໍ້ສະເໜີທີ່ສຳຄັນເພື່ອປັບປຸງຮ່າງຖະແຫຼງການ ວຽງຈັນ ໄລຍະທີ່ III

### ການຮ່ວມມືແບບຮັດກຸມ

ເນັ້ນໜັກໃສ່ການພັດທະນາທີ່ມີຄວາມຍືນຍົງ ແລະ ການປັບຕົວ ໂດຍຜ່ານການເສີມສ້າງຄວາມເຂັ້ມແຂງດ້ານການຮ່ວມມື, ການເກັບລາຍຮັບພາຍໃນ ແລະ ສົ່ງເສີມການມີສ່ວນຮ່ວມຈາກທຸກພາກສ່ວນ.

### ການພັດທະນາທຶນຊັບພະຍາກອນມະນຸດ

ໃຫ້ບຸລິມະສິດການລົງທຶນໃສ່ການພັດທະນາເດັກນ້ອຍ ແລະ ການສຶກສາ ເພື່ອສົ່ງເສີການມີສຸຂະພາບທີ່ແຂງແຮງ ແລະ ການສຶກສາທີ່ດີຂຶ້ນ, ເສີມສ້າງຄວາມເຂັ້ມແຂງໃນໄລຍະຍາວ ໃຫ້ສະຖາບັນ ໃນການປັບຕົວ.

### ຂອບການເງິນທີ່ມີການເຊື່ອມໂຍງ

ຫັນປ່ຽນຈາກວິທີການຊຸກຍູ້ການຊ່ວຍເຫຼືອ ໄປສູ່ການສະໜອງທຶນທີ່ຫຼາກຫຼາຍ ເຊິ່ງປະກອບມີແຫຼ່ງທຶນພາຍໃນ ແລະ ຕ່າງປະເທດ, ໂດຍເນັ້ນໃສ່ຂອບການເງິນແຫ່ງຊາດ ທີ່ເຊື່ອມໂຍງໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ - ສັງຄົມ ຄັ້ງທີ່ 9 ແລະ ຄັ້ງທີ່ 10.

     

# ກົນໄກການຈັດຕັ້ງປະຕິບັດ ແລະ ການປະສານງານ

### ປັບປຸງການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ

ນໍາໃຊ້ການຈັດກອງປະປະຊຸມທັງແບບເຊິ່ງໜ້າ ແລະ ອອນລາຍ ຮ່ວມກັບການນໍາໃຊ້ແບບຟອມຄົຈິຕອນ ເພື່ອການປະສານງານທີ່ດີຂຶ້ນກ່ວາເກົ່າ, ທັງເພື່ອຮັບປະກັນການແລກປ່ຽນຂໍ້ມູນ ລະຫວ່າງ ຄູ່ຮ່ວມພັດທະນາ ແລະ ຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ.

### ການຕິດຕາມ & ການປະເມີນຜົນ

ນໍາໃຊ້ຕົວຊີ້ວັດ ເພື່ອເປັນບ່ອນອີງໃນການຕິດຕາມ ແລະ ປະເມີນຜົນ, ການເຊື່ອມໂຍງລະບົບ ODA-MIS ແລະ ລະບົບຄຸ້ມຄອງຂໍ້ມູນການເງິນ ຂອງກະຊວງການເງິນ.

### ປະຕິຮູບຂະບວນການປະຊຸມໂຕະມົນ

ປະຕິຮູບຂະບວນການໂຕະມົນ, ການເຊື່ອມໂຍງວຽກປັບປຸງສະຖາບັນ ເຂົ້າກັບວຽກຄຸ້ມຄອງການເງິນ. ປັບປຸງໜ່ວຍງານປຶກສາຫາລືກັບຄູ່ຮ່ວມພັດທະນາ ເພື່ອເປັນການສະໜັບສະໜູນໃຫ້ແຜນພັດທະນາເສດຖະກິດ - ສັງຄົມ ໃຫ້ມີປະສິດທິຜົນ.

### ປັບປຸງຂັ້ນຕອນການອະນຸມັດ

ຊຸກຍູ້ໃຫ້ຂັ້ນຕອນຕ່າງໆໃນການບໍລິຫານຄຸ້ມຄອງແຫຼ່ງທຶນ ODA ວ່ອງໄວຂຶ້ນກ່ວາເກົ່າ ແລະ ມີການຖອດຖອນບົດຮຽນຈາກການຈັດຕັ້ງປະຕິບັດທີ່ປະສົບຜົນສໍາເລັດ ຈາກ ປະເທດ ສສ ຫວຽດນາມ.

### ທົບທວນໂຄງສ້າງການປະສານງານ

ປັບປຸງໜ່ວຍງານປຶກສາຫາລືກັບຄູ່ຮ່ວມພັດທະນາຕາມການປັບປຸງໂຄງຮ່າງການຈັດຕັ້ງຂອງບັນດາກະຊວງ, ພ້ອມທັງການປັບປຸງໂຄງສ້າງຢູ່ຂັ້ນແຂວງ.

# ຄວາມໂປ່ງໃສ, ຄວາມຮັບຜິດຊອບ, ແລະ ນະວັດຕະກຳ

## ຄວາມໂປ່ງໃສ & ຄວາມຮັບຜິດຊອບ

ສັງລວມບັນດານິຕິກຳທີ່ກຳນົດມາດຕະການຕ້ານການສໍ້ລາດບັງຫຼວງ ແລະ ຕ້ານການຟອກເງິນ. ຮັບປະກັນການເຂົ້າເຖິງຂໍ້ມູນຂ່າວສານຂອງສາທາລະນະ ນອກເຫນືອຈາກຊ່ອງທາງດິຈິຕອນ ແລະ ເພີ່ມຄວາມຮັບຜິດຊອບຕໍ່ຄໍາຫມັ້ນສັນຍາຕໍ່ຄວາມໂປ່ງໃສ.

## ການມີສ່ວນຮ່ວມຂອງຫຼາຍພາກສ່ວນ

ຮັບປະກັນການເປັນຕົວແທນຢ່າງເປັນທາງການ ແລະ ການເຂົ້າຮ່ວມທີ່ມີຄວາມໝາຍຂອງບັນດາອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນໃນຂອບການຮ່ວມມືເພື່ອການພັດທະນາ ໂດຍມີກົນໄກການເຂົ້າຮ່ວມຢ່າງຊັດເຈນ.

## ການຫັນເປັນດິຈິຕອນ

ເຊື່ອມໂຍງການຫັນເປັນດິຈິຕອນ ເພື່ອກ້າວໄປເຖິງການຫັນເປັນທັນສະ ໄໝ ທັງເພື່ອຮັບປະກັນຄວາມມີປະສິດທິຜົນ. ສ້າງສະຖາບັນທີ່ຮັບຜິດຊອບຄຸ້ມຄອງຂໍ້ມູນ ເພື່ອຮັບປະກັນການນຳໃຊ້ຄວາມຮູ້ດັ່ງກ່າວໃຫ້ຕໍ່ເນື່ອງ.

## ຂອບຜົນໄດ້ຮັບທີ່ແທ້ຈິງ

ພັດທະນາຂອບວຽກທີ່ແນໃສ່ຜົນໄດ້ຮັບທີ່ສາມາດສິ່ງໄດ້, ປະສົມປະສານກັບໜ່ວຍງານປຶກສາຫາລືກັບຄູ່ຮ່ວມພັດທະນາ ເພື່ອຫຼຸດຜ່ອນການຊໍ້າຊ້ອນ. ລວມເອົາການຜົນຈາກການຕິດຕາມການປະເມີນການຈັດຕັ້ງປະຕິບັດວຽກງານຕິດຕາມປະສິດທິຜົນການຮ່ວມມືເພື່ອການພັດທະນາ ທີ່ຜ່ານມາເພື່ອແກ້ໄຂສິ່ງທ້າທາຍໃນສະພາບການຕົວຈິງ.

**ການລົງນາມໃນ VD III ຂອງຄູ່ຮ່ວມພັດທະນາ ແມ່ນສາມາດດຳເນີນການພາຍຫຼັງສຳເລັດກອງປະຊຸມໂຕະມົນລະດັບສູງ ເພາະບັນດາຄູ່ຮ່ວມພັດທະນາ ຈະຕ້ອງໄດ້ຂໍອະນຸຍາດຮັບຮອງການລົງນາມ ຈາກສຳນັກງານໃຫ່ຍກ່ອນຈຶ່ງສາມາດລົງນາມໄດ້.**

# ຂັ້ນຕອນຕໍ່ໄປ

1

**ວັນທີ 13 ຕຸລາ 2025**

ປັບປຸງຮ່າງ VDIII ເພື່ອນຳສົ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ແລະຄູ່ຮ່ວມພັດທະນາ

2

**ວັນທີ 20 ຕຸລາ 2025**

ວັນທີສຸດທ້າຍໃນການປະກອບຄຳເຫັນ

3

**ວັນທີ 27 ຕຸລາ 2025**

ຮ່າງຖະແຫຼງການວຽງຈັນສະບັບສຸດທ້າຍ

4

**ວັນທີ 19 ພະຈິກ 2025**

ລົງນາມໃນ VDIII ຢູ່ກອງປະຊຸມໂຕະມົນລະດັບສູງ

5

**ເດືອນທັນວາ**

ລົງນາມໃນ VDIII ຈາກຄູ່ຮ່ວມພັດທະນາອື່ນໆຕື່ມ ຈັດຕັ້ງປະຕິບັດໃນງວດທີ I

# VD II (2016-2025) Signing at the HL RTM 2015




Iis Excellency Mr. Saleumxay Kommasith
'ice Minister of Foreign Affairs

Ms. Kaarina Immonen
UN Resident Coordinator
UNDP Resident Representative

H.E. Mr. Craig Chittick
First Assistant Secretary
Department of Foreign Affairs and Trade
Australia

H.E. Mr. Phil Calvert
Ambassador Extraordinary and
Plenipotentiary of Canada

Ms. Shannon Austin
Chargé d'Affaires,
New Zealand Embassy

H.E. Ms. Belinda Mariano Ante
Ambassador Extraordinary and
Plenipotentiary of the Philippines

H.E. Mr. Lodoidamba Galbadrakh
Ambassador Extraordinary and
Plenipotentiary of Mongolia

H.E. Mr. Mikhail V Baranov
Ambassador Extraordinary and
Plenipotentiary of the Russian
Federation

H.E. Mr. Kim Soo-Gwon
Ambassador Extraordinary and
Plenipotentiary of the Republic of Korea

Ms. Sandra Nicoll
Country Director - Lao PDR Resident
Mission - Asian Development Bank

Ms. Sally Burningham
World Bank Country Manager

H.E. Mr. Daniel A. Clune
Ambassador Extraordinary and
Plenipotentiary of the United States of
America

# ຂອບໃຈຫຼາຍໆ

